ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ: 09154 /ກພສ

ນະຄອນຫຼວງວຽງຈັນ, ວັນທີ: 13 ກັນຍາ 2023

# ສະໂນດນຳສົ່ງ

ເຖິງ: - ຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງ;

- ຫົວໜ້າດ່ານພາສີສາກົນໃນຂອບເຂດທົ່ວປະເທດ.

ເລື່ອງ: ນຳສົ່ງເອກະສານ.

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ແຈ້ງການ ຂອງກະຊວງການເງິນກ່ຽວກັບການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ສະບັບເລກທີ 2766/ກງ, ລົງວັນທີ 12 ກັນຍາ 2023 | 01 ສະບັບ | ເພື່ອຈັດຕັ້ງປະຕິບັດ |
| | ລວມ: | 01 ສະບັບ | |

ຫົວໜ້າກົມ

ກະຊວງການເງິນ ກົມພາສີ

ພູເຂົາຄຳ ວັນນະວົງໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2766 /ກງ

ນະຄອນຫຼວງວຽງຈັນ, ວັນທີ 12 ກັນຍາ 2023

# ແຈ້ງການ

ເຖິງ: - ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ
- ຜູ້ປະກອບການນຳເຂົ້ານ້ຳມັນເຊື້ອໄຟ
- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບທຸລະກິດການນຳເຂົ້ານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ

**ເລື່ອງ: ການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີແກ້ໄຂບັນຫາເຄັ່ງຮ້ອນ ຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບເລກທີ 13/ນຍ, ລົງວັນທີ 29 ສິງຫາ 2023;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 08158/ກພສ, ລົງວັນທີ 05 ກັນຍາ 2023.

ເພື່ອຮັບປະກັນໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດນ້ຳມັນເຊື້ອໄຟ ຊຶ່ງເປັນສິນຄ້າຍຸດທະສາດ ແລະ ມີຄວາມອ່ອນໄຫວຕໍ່ເສດຖະກິດ-ການເງິນ ທີ່ລັດຖະບານຄວບຄຸມ, ດັດສົມໃຫ້ເໝາະສົມກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດໃນແຕ່ລະໄລຍະ, ແນໃສ່ປ້ອງກັນການຫຼົບຫຼີກການປະຕິບັດພັນທະດ້ານພາສີ-ອາກອນ ແລະ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ-ການເງິນໃຫ້ປະກົດຜົນເປັນຈິງ; ເຮັດໃຫ້ການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ລັດຖະມົນຕີ ກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ຜູ້ປະກອບການນຳເຂົ້ານ້ຳມັນເຊື້ອໄຟ ຕ້ອງປະກອບເອກະສານການແຈ້ງພາສີເປັນອັນສະເພາະ ໂດຍລາຍລະອຽດ ດັ່ງນີ້:
   1) ແບບພິມແຈ້ງພາສີໂດຍສັງເຂບ (Cargo Manifest Declaration);
   2) ແບບພິມແຈ້ງພາສີເປັນລາຍລະອຽດ (ACDD);
   3) ໃບແຈ້ງລາຄາ (Invoice);

4) ໃບລາຍການຫຸ້ມຫໍ່ສິນຄ້າ (Packing List);
5) ໃບອະນຸຍາດນໍາເຂົ້ານໍ້າມັນເຊື້ອໄຟ (Import Permit);
6) ໃບຢັ້ງຢືນດ້ານປະລິມານ (Certificate of Quantity) ທີ່ອອກໃຫ້ໂດຍໂຮງກັ່ນນໍ້າມັນເຊື້ອໄຟ ຈາກປະເທດຕົ້ນທາງການຂົນສົ່ງ;
7) ໃບກໍາກັບການຂົນສົ່ງ (Delivery Note/Truck Bill/Bill of Lading) ທີ່ອອກໃຫ້ໂດຍຜູ້ບໍລິການຂົນສົ່ງຈາກປະເທດຕົ້ນທາງ;
8) ໃບແຈ້ງພາສີຂາອອກ (Customs Declaration for Export);
9) ສັນຍາຊື້-ຂາຍນໍ້າມັນເຊື້ອໄຟ ລະຫວ່າງ ຜູ້ສົ່ງອອກ ແລະ ຜູ້ນໍາເຂົ້າ (Sale Contract).

2. ການນໍາເຂົ້ານໍ້າມັນເຊື້ອໄຟ ແມ່ນໃຫ້ແຈ້ງພາສີຢູ່ດ່ານພາສີສາກົນ ທີ່ມີລະບົບແຈ້ງພາສີເອເລັກໂຕຣນິກ ແລະ ເຄື່ອງມືຮັບໃຊ້ໃນການກວດກາຂອງເຈົ້າໜ້າທີ່ພາສີ ດັ່ງລາຍລະອຽດລຸ່ມນີ້:
1) ດ່ານພາສີສາກົນທ່າບົກທ່ານາແລ້ງ ແລະ ຂົວມິດຕະພາບ 1
2) ດ່ານພາສີສາກົນສາກົນບໍ່ເຕັນ
3) ດ່ານພາສີສາກົນຂົວມິດຕະພາບ 4
4) ດ່ານພາສີສາກົນປາງຫົກ
5) ດ່ານພາສີສາກົນນໍ້າເຫືອງ
6) ດ່ານພາສີສາກົນນໍ້າເງິນ
7) ດ່ານພາສີສາກົນນໍ້າໂສຍ
8) ດ່ານພາສີສາກົນນໍ້າກັ່ນ
9) ດ່ານພາສີສາກົນປາກຊັນ
10) ດ່ານພາສີສາກົນນໍ້າພາວ
11) ດ່ານພາສີສາກົນນາເພົ້າ
12) ດ່ານພາສີສາກົນຂົວມິດຕະພາບ 3
13) ດ່ານພາສີສາກົນແດນສະຫວັນ
14) ດ່ານພາສີສາກົນຂົວມິດຕະພາບ 2 ແລະ ທ່າບົກສະຫວັນນະເຂດ
15) ດ່ານພາສີສາກົນວັງເຕົ່າ ແລະ ທ່າບົກວັງເຕົ່າ
16) ດ່ານພາສີສາກົນໜອງນົກຂຽນ
17) ດ່ານພາສີສາກົນລະໄລ
18) ດ່ານພາສີສາກົນດາກຕະອອກ
19) ດ່ານພາສີສາກົນພູເກືອ

**ໝາຍເຫດ: ດ່ານພາສີສາກົນອື່ນທີ່ບໍ່ໄດ້ລະບຸຂ້າງເທິງ ແມ່ນບໍ່ອະນຸຍາດໃຫ້ນໍາເຂົ້ານໍ້າມັນເຊື້ອໄຟຢ່າງເດັດຂາດ.**

3. ການນໍາເຂົ້າ ແລະ ເຄື່ອນຍ້າຍໄປຈໍາໜ່າຍນໍ້າມັນເຊື້ອໄຟ ໃຫ້ປະຕິບັດ ດັ່ງນີ້:

| | **ດ່ານພາສີສາກົນບ່ອນນໍາເຂົ້າ** | **ແຂວງທີ່ອະນຸຍາດໃຫ້ເຄື່ອນຍ້າຍໄປຈໍາໜ່າຍ** |
|---|---|---|
| 1 | ດ່ານພາສີສາກົນທ່າບົກທ່ານາແລ້ງ ແລະ ຂົວມິດຕະພາບ 1 | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງໄຊສົມບູນ, ແຂວງບໍລິຄໍາໄຊ, ແຂວງຊຽງຂວາງ ແລະ ແຂວງຫົວພັນ |
| 2 | ດ່ານບໍ່ເຕັນ | ແຂວງຫຼວງນໍ້າທາ, ແຂວງອຸດົມໄຊ, ແຂວງຜົ້ງສາລີ |

| | | |
|---|---|---|
| 3 | ດ່ານພາສີສາກົນຂົວມິດຕະພາບ 4 | ແຂວງບໍ່ແກ້ວ, ແຂວງອຸດົມໄຊ, ແຂວງຜົ້ງສາລີ |
| 4 | ດ່ານພາສີສາກົນປາຫີກ | ແຂວງຜົ້ງສາລີ, ແຂວງອຸດົມໄຊ |
| 5 | ດ່ານພາສີສາກົນນ້ຳເຫືອງ | ແຂວງໄຊຍະບູລີ, ແຂວງຫຼວງພະບາງ, ແຂວງຊຽງຂວາງ ແລະ ແຂວງຫົວພັນ |
| 6 | ດ່ານພາສີສາກົນນ້ຳເງິນ | ແຂວງໄຊຍະບູລີ, ແຂວງຫຼວງພະບາງ, ແຂວງຊຽງຂວາງ ແລະ ແຂວງຫົວພັນ |
| 7 | ດ່ານພາສີສາກົນນ້ຳໂສຍ | ແຂວງຫົວພັນ, ແຂວງຫຼວງພະບາງ |
| 8 | ດ່ານພາສີສາກົນນ້ຳກັ່ນ | ແຂວງຊຽງຂວາງ, ແຂວງຫຼວງພະບາງ ແລະ ແຂວງໄຊສົມບູນ |
| 9 | ດ່ານພາສີສາກົນປາກຊັນ | ແຂວງບໍລິຄຳໄຊ, ແຂວງໄຊສົມບູນ, ແຂວງຄຳມ່ວນ, ແຂວງຊຽງຂວາງ ແລະ ແຂວງຫົວພັນ |
| 10 | ດ່ານພາສີສາກົນນ້ຳພາວ | ແຂວງບໍລິຄຳໄຊ, ແຂວງໄຊສົມບູນ, ແຂວງຄຳມ່ວນ, ແຂວງຊຽງຂວາງ ແລະ ແຂວງຫົວພັນ |
| 11 | ດ່ານພາສີສາກົນນາເພົ້າ | ແຂວງຄຳມ່ວນ, ແຂວງບໍລິຄຳໄຊ ແລະ ແຂວງສະຫວັນນະເຂດ |
| 12 | ດ່ານພາສີສາກົນຂົວມິດຕະພາບ 3 | ແຂວງຄຳມ່ວນ, ແຂວງບໍລິຄຳໄຊ ແລະ ແຂວງສະຫວັນນະເຂດ |
| 13 | ດ່ານພາສີສາກົນແດນສະຫວັນ | ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງສາລະວັນ |
| 14 | ດ່ານພາສີສາກົນຂົວມິດຕະພາບ 2 ແລະ ທ່າບົກສະຫວັນນະເຂດ | ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງສາລະວັນ |
| 15 | ດ່ານພາສີສາກົນວັງເຕົ່າ ແລະ ທ່າບົກວັງເຕົ່າ | ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື |
| 16 | ດ່ານພາສີສາກົນໜອງນົກຂຽນ | ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື |
| 17 | ດ່ານພາສີສາກົນລະໄລ | ແຂວງສາລະວັນ,ແຂວງຈຳປາສັກ ແລະ ແຂວງເຊກອງ |
| 18 | ດ່ານພາສີສາກົນດາກຕະອອກ | ແຂວງເຊກອງ, ແຂວງຈຳປາສັກ, ແຂວງສາລະວັນ ແລະ ແຂວງອັດຕະປື |
| 19 | ດ່ານພາສີສາກົນພູເກືອ | ແຂວງອັດຕະປື, ແຂວງເຊກອງ ແລະ ແຂວງຈຳປາສັກ |

ກໍລະນີ ຜູ້ປະກອບການມີຄວາມຈຳເປັນຕ້ອງການເຄື່ອນຍ້າຍນ້ຳມັນເຊື້ອໄຟໄປສະໜອງໃຫ້ໂຄງການພັດທະນາຢູ່ແຂວງອື່ນ ນອກຈາກຂອບເຂດການເຄື່ອນຍ້າຍທີ່ກຳນົດຂ້າງເທິງ ຕ້ອງສະເໜີເຖິງກົມພາສີພິຈາລະນາເປັນແຕ່ລະກໍລະນີ.

4. ມອບໃຫ້ກົມພາສີ, ຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງ ແລະ ຫົວໜ້າດ່ານພາສີສາກົນ ຈັດຕັ້ງປະຕິບັດ, ເຜີຍແຜ່ ແລະ ແນະນຳໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານພາສີສາກົນ ເອົາໃຈໃສ່ໃນການກວດກາຂໍ້ມູນ, ເອກະ

ສານປະກອບການແຈ້ງ ແລະ ສິນຄ້າ, ເຄື່ອງຂອງຕົວຈິງ ຕາມຫຼັກການບໍລິຫານຄວາມສ່ຽງ. ສໍາລັບການກວດກາສິນຄ້າ, ເຄື່ອງຂອງຕົວຈິງ ໃຫ້ນໍາໃຊ້ເຄື່ອງມືທັນສະໄໝ ເປັນຕົ້ນແມ່ນ ຊີງຊັ່ງດິຈິຕໍ.

5. ແຈ້ງການສະບັບນີ້ ມີຜົນສັກສິດນໍາໃຊ້ນັບແຕ່ວັນທີ 01 ຕຸລາ 2023 ເປັນຕົ້ນໄປ, ເນື້ອໃນນິຕິກໍາໃດ ທີ່ກະຊວງການເງິນໄດ້ອອກໃນໄລຍະຜ່ານມາ ຫາກຂັດກັບແຈ້ງການສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ